# ການເພີ່ມຜູ້ໃຊ້ ແລະ ກຳນົດສິດ

## ການເພີ່ມຜູ້ໃຊ້ ແລະ ກຳນົດສິດເຂົ້າເຖິງການໃຊ້ງານ

ໃນລະບົບ 1 ຈະບໍ່ຈຳກັດຜູ້ໃຊ້ງານ ແຕ່ຈະໃຊ້ໄດ້ຟຣີ 3 ຜູ້ໃຊ້, ຖ້າຕ້ອງການເພີ່ມຜູ້ໃຊ້ງານສາມາດຕິດຕໍ່ຫາທີມງານຊ່ວຍເຫຼືອໄດ້ທາງ Whatsapp

1 ຜູ້ໃຊ້ = 1 ອີເມວ ແລະ ເບີໂທ, ເພາະອີເມວ 1 ຈະຜູກເບີໂທໄດ້ 1 ເບີເທົ່ານັ້ນ

1 ບໍລິສັດ = 1 ລະບົບ, 1 ອີເມວ ສາມາດໃຊ້ໄດ້ບໍ່ຈຳກັດບໍລິສັດ

ຂັ້ນຕອນການຕັ້ງຄ່າ:

**1. ການເພີ່ມຜູ້ໃຊ້ໃໝ່**

ເຂົ້າການຕັ້ງຄ່າໃນເມນູຫຼັກ > ຜູ້ໃຊ້




ພິມອີເມວທີ່ຕ້ອງການໃຫ້ເຂົ້າລະບົບ ແລ້ວກົດເພີ່ມ 




**ສຳລັບອີເມວທີ່ຍັງບໍ່ເຄີຍມີລະບົບ**

1. ລະບົບຈະແຈ້ງເຕືອນຂຶ້ນມາ ຖ້າອີເມວທີ່ເພີ່ມໃໝ່ຍັງບໍ່ເຄີຍມີລະບົບມາກ່ອນ

2. ເພີ່ມຂໍ້ມູນໃຫ້ຜູ້ໃຊ້ໃໝ່, ໃສ່ຊື່ ແລະ ລະຫັດຜ່ານ ເພື່ອໃຫ້ຜູ້ໃຊ້ໃໝ່ນຳໃຊ້ໃນການເຂົ້າລະບົບ

- ສາມາດໃຫ້ຜູ້ໃຊ້ງານຂອງອີເມວນັ້ນ ຢັ້ງຢືນເບີໂທລະສັບຫຼັງເຂົ້າໃຊ້ງານດ້ວຍຕົວເອງໄດ້

- ເປີດໃຊ້ງານສຳລັບ 2FA ແມ່ນຕ້ອງເປັນອີເມວທີ່ໃຊ້ງານຈິງ ເພື່ອເວລາເຂົ້າລະບົບຈະໄດ້ຮັບຕົວເລກ OTP ໃນອີເມວກ່ອນ

3. ຫຼັງໃສ່ຂໍ້ມູນແລ້ວ ກົດບັນທຶກ, ຈາກນັ້ນເລືອກກຳນົດສິດການເຂົ້າເຖິງແຕ່ລະຟັງຊັ້ນໃຫ້ຜູ້ໃຊ້ງານໃໝ່ໄດ້ເລີຍ




## ສຳລັບອີເມວທີ່ເຄີຍເຂົ້າລະບົບແລ້ວ

ລະບົບຈະຟ້ອງຂຶ້ນມາ ແລະ ບໍ່ຈຳເປັນຕ້ອງເພີ່ມຂໍ້ມູນຂອງຜູ້ໃຊ້ໃໝ່.

ສະນັ້ນ, ຫຼັງເພີ່ມອີເມວແລ້ວແມ່ນກຳນົດສິດການເຂົ້າເຖິງຟັງຊັ້ນຕ່າງໆໄດ້ເລີຍ ແລ້ວເຂົ້າລະບົບດ້ວຍລະຫັດຜ່ານເກົ່າໄດ້ເລີຍ.



## 2. ການກຳນົດສິດ

ສາມາດກຳນົດສິດຕອນເພີ່ມຜູ້ໃຊ້ໃໝ່ ຫຼື ກົດແກ້ໄຂຂອງຜູ້ໃຊ້ທີ່ມີຢູ່ແລ້ວເພື່ອປ່ຽນແປງສິດການໃຊ້ງານ




ເລືອກກຳນົດສິດແລ້ວກົດ "**ບັນທຶກ**"

